ANDREW JACKSON SCHOOL
1213 S. 12TH STREET
PHILADELPHIA, PA 19147

**2014/05/22**

ຮຽນທ່ານພໍ່ແມ່/ຜູ້ປົກຄອງທີ່ນັບຖື:

ມັນເປັນຄວາມເສົ້າສະຫຼົດໃຈອັນໃຫຍ່ຫຼວງທີ່ຈະແຈ້ງໃຫ້ທ່ານຊາບກ່ຽວກັບການເສຍຊີວິດ ກະທັນຫັນຂອງນັກຮຽນໃນເກຣດທີ 1 ຂອງພວກເຮົາຄົນໜຶ່ງ. ພວກເຮົາຢາກຈະແຈ້ງໃຫ້ທ່ານ ຊາບວ່າ ທີມງານຕອບໂຕ້ວິກິດການ/ສຸກເສີນຂອງໂຮງຮຽນເຂດຟີລາເດັນເຟຍchool District of S) (Philadelphia ກຳລັງໃຫ້ການຊ່ວຍເຫຼືອໃຫ້ຄຳປຶກສາແກ່ເດັກນ້ອຍນັກຮຽນຢູ່ໃນໂຮງຮຽນຂອງ ພວກເຮົາໃນມື້ນີ້. ຜູ້ໃຫ້ຄຳປຶກສາເລື່ອງຄວາມໂສກເສົ້າໄດ້ລົມກັບເດັກນ້ອຍແຕ່ລະຄົນ ແລະຈັດ ລົມກັນເປັນກຸ່ມນ້ອຍຕາມທີ່ຈຳເປັນ.

ການສູນເສຍກະທັນຫັນແບບນີ້ສາມາດເຮັດໃຫ້ເກີດຜົນກະທົບໃຫຍ່ຫຼວງຕໍ່ນັກຮຽນ. ຕໍ່ກັບ ເຫດຜົນນັ້ນ, ພວກເຮົາຢາກໃຫ້ທ່ານຟັງລູກຊາຍ ຫຼືລູກສາວຂອງທ່ານ ພ້ອມທັງຖາມເບິ່ງຄວາມ ຮູ້ສຶກ ແລະປະຕິກິລິຍາຂອງເຂົາເຈົ້າຕໍ່ການສູນເສຍດັ່ງນີ້. ການເສຍຊີວິດກະທັນຫັນມີຄວາມເຈັບ ປວດສະເໝີທີ່ຈະເຂົ້າໃຈໄດ້, ແລະລູກຂອງທ່ານອາດຈະໄດ້ຮັບສັນຍານຄວາມຕຶງຄຽດ.  ສັນຍານ ເຫຼົ່ານີ້ບາງອັນມີຄື:

- ບໍ່ສາມາດມີສະມາທິໄດ້
- ມີອາການຄັນ ຫຼືຄວາມໃຈຮ້າຍເພີ່ມຂຶ້ນ
- ການແຍກຕົວ ແລະຖອນຕົວອອກຈາກກິດຈະກຳປົກກະຕິ ແລະໝູ່ຄູ່
- ຮູ້ສຶກວ່າມີຄວາມຜິດ
- ຄວາມຢ້ານ ແລະຄວາມກັງວົນ
- ມີການປ່ຽນແປງເລື່ອງການນອນ ຫຼືກິນບໍ່ແຊບ

ຖ້າທ່ານສັງເກດເຫັນການປ່ຽນແປງໃດໜຶ່ງຜິດປົກກະຕິຢູ່ໃນພຶດຕິກຳ ຫຼືອາລົມຂອງລູກຂອງ ທ່ານ, ກະລຸນາຕິດຕໍ່**ຫາໂຮງຮຽນແອນດຣູແຈັກສັນ** **(Andrew Jackson School)** ທີ່ເບີ **6223-952-215** ເພື່ອຂໍການຊ່ວຍເຫຼືອເພີ່ມເຕີມ. ກະລຸນາຢ່າລັງ ເລໃຈທີ່ຈະຕິດຕໍ່ຫາພວກເຮົາ ຖ້າຫາກທ່ານມີຄຳຖາມຂ້ອງໃຈ. ຂໍ້ມູນເພີ່ມເຕີມແມ່ນມີໃຫ້ຢູ່ດ້ານ ຫຼັງຂອງໜັງສືສະບັບນີ້.

ດ້ວຍຄວາມນັບຖື,

ລີຊາ ເຊຍຣານກາ-ກັບລານ (Kaplan-Lisa Ciaranca)
ອາຈານໃຫຍ່